# ແມງບົ່ວ

## 1. ລັກສະນະທົ່ວໄປ

ແມງບົ່ວມັກເກີດ ຫຼື ມັກລະບາດຢູ່ບ່ອນທີ່ເຮັດການຜະລິດ ໄກ້ກັບພູດອຍ ຫຼື ໄກ້ກັບປ່າດົງ, ບົ່ວເປັນແມງໄມ້ໂຕນ້ອຍໆ ຊຶ່ງແມງກະບີ້ຂອງບົ່ວ ຄ້າຍຄືກັນກັບໂຕຍຸງຕ່າງແຕ່ຂາຂອງ ແມງບົ່ວຍາວກ່ອນຈັກໜ້ອຍ ແລະ ມີປີກເປັນສີຂາວ ລຳໂຕມີ ສີແດງ ສ່ວນຕົວຜູ້ລຳໂຕມີສີນ້ຳຕານ, ແມງກະບີ້ຂອງບົ່ວ ມັກອອກຫຼີ້ນແສງໄຟຍາມກາງຄືນ, ແມງບົ່ວຈະວາງໄຂ່ຢູ່ ຕາມສຸມ ຫຼື ກາບໃບເຂົ້າ..



ຮູບ : ແມງບົ່ວ

## 2. ໄລຍະລະບາດ

ແມງບົ່ວ ສາມາດທຳລາຍຕົ້ນເຂົ້າໄດ້ເກືອບຕະຫຼອດລະດູການ ແຕ່ຮ້າຍແຮງແມ່ນໄລຍະຕົ້ນເຂົ້າແຕກກໍສູງສຸດ, ຖ້າປີໃດຫາກມີສະພາບດິນຟ້າອາກາດຊຸ່ມຊື່ນ, ຝົນຕົກດີຝົນຕົກລິນຢູ່ຕະຫຼອດໄລຍະຕິດຕໍ່ກັນຫຼາຍ ນີ້ແມ່ນເໝາະສົມກັບການແຜ່ລະບາດຂອງແມງບົ່ວ.

## 3. ລັກສະນະການທຳລາຍ

ແມງບົ່ວໄຂ່ໄດ້ 3 — 4 ມື້ ໄຂ່ກໍ່ຈະເບາະເປັນຕົວໜອນ ແລ້ວເຂົ້າໄປອາໃສເຈາະກິນ ສ່ວນທາງໃນຂອງຍອດອ່ອນ ທີ່ຍັງບໍ່ທັນພົ້ນອອກມາ ( ໃບທຸງ ຫຼື ໃບໃຈກາງຂອງຕົ້ນ ). ໃບໃຈກາງຂອງຕົ້ນທີ່ຖືກບົ່ວທຳລາຍ ກໍ່ຈະກາຍເປັນຄືໃບຜັກບົ່ວ, ຕົ້ນໃດທີ່ຖືກບົ່ວທຳລາຍ ກໍ່ຈະບໍ່ອອກຮວງເລີຍ, ( ຖ້າໃນພື້ນທີ່ນາ ທີ່ມີຄວາມອຸດົມສົມບູນມີການໃສ່ຝຸ່ນວິທະຍາສາດຫຼາຍ ບົ່ວມັກເກີດຫຼາຍທີ່ສຸດ ).

## 4. ການປ້ອງກັນ ແລະ ກຳຈັດ

- ໃຊ້ແນວພັນເຂົ້າທີ່ມີຄວາມຕ້ານທານຕໍ່ແມງບົ່ວໄດ້ດີ .
- ຖ້ານາມີລະບົບຊົນລະປະທານ ຖ້າການລະບາດບໍ່ຮ້າຍແຮງ ໃຫ້ປ່ອຍນ້ຳເຂົ້າຖ້ວມຍອດເຂົ້າ ປະໄວ້ປະມານ 12 ຊມ .ແລ້ວຈິ່ງເປົ່ງນ້ຳອອກ .
- ໃຊ້ຢາດີອາຊີນອນ 14 % ຊະນິດເມັດ ຫວ່ານ 2 — 3 ເທື່ອ ເທື່ອລະ 8 — 10 ກລ/ຮຕ.
- ໃຊ້ຢາຟູຣາດານ 3 % ຊະນິດເມັດ ຫວ່ານໃນອັດຕາ 25 — 30 ກລ/ຮຕ.
- ໃຊ້ຢາອາໂຊດຣິນ 65 % ຊະນິດນ້ຳ ໃນອັດຕາ 2 ບ່ວງແກງ ປະສົມກັບນ້ຳ 10 ລິດ ສີດໃຫ້ທົ່ວ.
- ໃຊ້ຢາເຊວິນ 85 % ຊະນິດຝຸ່ນ ໃນອັດຕາ 2 — 3 ບ່ວງແກງ ປະສົມກັບນ້ຳ 15 ລິດ ສີດໃຫ້ທົ່ວ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ເຕັກນິກການປ້ອງກັນ ແລະ ກຳຈັດແມງໄມ້ສັດຕູພືດຕົ້ນຕໍຂອງເຂົ້າ

# ( ແມງບົ່ວ )



ຈັດຕັ້ງປະຕິບັດໂດຍ *CETDU*
(ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ)

ຮ່ວມກັບ:

ໂຄງການ ສົ່ງເສີມ ກະສິກຳ (*LEAP*)